SOMPHONEXAY TOUR
Head Office : 15-122 Ban Lakmuang Pakse Champasak Province, Lao P.D.R
ໂທ /: +856 2055532069 | LINE: somphonexaytour
: somphonexaytour@gmail.com | somphonexay@me.com
: www.somphonexaytour.com


ລະຫັດທົວ: SP-JP002



# ຟູຈິ- ຊາກູລະ-ໂຕກຽວ-ໂຫ່ຈິມິນ

## ເດີນທາງ 03 – 08 / 04 / 2025 ( 6 ມື້ 5 ຄືນ )

| ຕາຕະລາງການເດີນທາງ | | | | | |
|---|---|---|---|---|---|
| ວັນທີ | ສະຖານທີ່ທ່ອງທ່ຽວ | ລາຍລະອຽດ ອາຫານ | | | ໂຮງແຮມທີ່ພັກ |
| | | ຕອນເຊົ້າ | ຕອນທ່ຽງ | ຕອນຄ່ຳ | |
| ມື້ທີ 1 | ປາກເຊ-ນະຄອນໂຮຈິມິນ(ຫວຽດນາມ) – ສະໜາມບິນນານາຊາດເຕີນເຊີນເຍີດ ໂດຍສາຍການບິນລາວແອລາຍ ຖ້ຽວບິນ QV 515 (0945–1120) ຕາມອັດຕາຍາໃສອາຫານທ່ຽງ – ເດີນທາງໂດຍສາຍການບິນ VietJet Air ຖ້ຽວບິນ | ✈ | – | ✈ | ✈ |
| ມື້ທີ 2 | ປະເທດຍີ່ປຸ່ນ – ເກາະຮອນຊູ – ສະໜາມບິນນານາຊາດນາຣິຕະ – ນະມັດສະການຫຼວງພໍ່ໂຕກາງແຈ້ງເມືອງຄາມາຄຸຣະ(ວັດໂຄໂຕຄຸອິນ) – ມິຊິມະ ສະກາຍວ໋ອກ – ເກັບສະຕໍເບີຣີສົດໆຈາກສວນ – ອາບນໍ້າແຮ່ຍີ່ປຸ່ນທາມະຊາດ | – | ✓ | ✓ | LAKE KAWAGUCHIKO JIRAGONNO |
| ມື້ທີ 3 | ທະເລສາບຄາວາກຸຈິໂກະ – ຖ່າຍຮູບພູເຂົາໄຟຟູຈິ ສວນສາທາລະນະ ໂອອິຊິ – ຊົມຊາກູລະ ສວນສາທາລະນະ ອາຣາຄຸຣະຍາມະ ເຊັ່ນເກັນ – ເມືອງໂກເທັມບະ – ອິດສະຫຼະຊ໋ອບປີ້ງ ໂກເທັມບະ ພຣີມ້ຽມ ເອົ້າເລັດ – ມະຫານະຄອນໂຕກຽວ | ✓ | ✓ | ✓ | TOKYO SUNSHINE CITY PRINCE HOTEL |
| ມື້ທີ 4 | ໂຕກຽວ – ຕະຫຼາດປາສຶກິຈິ – ນະມັດສະການເຈົ້າແມ່ກວນອິມ ວັດອາຊາກຸສະ – ຊົມຊາກູລະ ສວນອຸເອໂນະ – ອິດສະຫຼະຊ໋ອບປີ້ງຍ່ານຊິນຈູກຸ | ✓ | ✓ | ✓ | NARITA WELCO NARITA HOTEL |
| ມື້ທີ 5 | ໂຕກຽວ – ນາຣິຕະ – ໂຫ່ຈິມິນ – -ສະໜາມບິນນານາຊາດ ເຕີນເຊີນເຢີດ (ໂຫ່ຈິມິນ) ທ່ຽວຊົມຕົວເມືອງຂອງນະຄອນໂຫ່ຈິມິນ, City Hall, Opera House, Notre Dam, Central post Office, Shopping Ben Thanh Market | ✓ | ✈ | ✓ | ACNOS SAIGON CENTRE HOTEL |
| ມື້ທີ 6 | ສະໜາມບິນນານາຊາດ ເຕີນເຊີນເຢີດ (ໂຫ່ຈິມິນ)-ສະໜາມບິນນານາຊາດປາກເຊ ໂດຍສາຍການບິນລາວແອລາຍ ຖ້ຽວບິນ QV 516 (1200–1335) | ✓ | ✈ | | |

SOMPHONEXAY TOUR
Head Office : 15-122 Ban Lakmuang Pakse Champasak Province, Lao P.D.R
ໂທ / : +856 2055532069 | LINE : somphonexaytour
: somphonexaytour@gmail.com | somphonexay@me.com
: www.somphonexaytour.com

### ມື້ທີ 1: ປາກເຊ-ນະຄອນໂຮຈິມິນ(ຫວຽດນາມ) - ສະໜາມບິນນານາຊາດເຕີນເຊີນເຍິດ - ເດີນທາງໂດຍສາຍການບິນ VietJet Air

- 08:00 ໂມງ ຕ້ອນຮັບຄະນະທີ່ສະໜາມບິນປາກເຊ ເພື່ອກະກຽມກະເປົ໋າເດີນທາງ ເດີນທາງສູ່ສະໜາມບິນນານາຊາດເຕີນເຊີນເຍິດ ນະຄອນ ໂຫ່ຈິມິນ ດ້ວຍຖ້ຽວບິນ QV 515 (0945-1120).
- 11:20 ໂມງ: ຮອດສະໜາມບິນ ນານາຊາດເຕີນເຊີນເຍິດ ນະຄອນໂຫ່ຈິມິນ ຕາມອັດຕະຍາໃສອາຫານທ່ຽງທີ່ສະໜາມບິນ.
- 21:00 ໂມງ: ນໍາຄະນະເຊັກອິນ ສາຍການບິນຫວຽດແຈັດ ເພື່ອເດີນທາງໄປສະໜາມບິນນານາຊາດນາຣິຕະ ປະເທດຍີ່ປຸ່ນ.
- 00:15 ໂມງ: ອອກເດີນທາງຈາກ ສະໜາມບິນນານາຊາດເຕີນເຊີນເຍິດ ນະຄອນໂຮຈິມິນ (ຫວຽດນາມ) ໂດຍສາຍການບິນ VietJet Air ຖ້ຽວບິນທີ0000. (ເວລາທ້ອງຖິ່ນປະເທດຍີປຸ່ນໄວກວ່າປະເທດລາວ 2 ຊົ່ວໂມງ ກະລຸນາປັບເປັນເວລາທ້ອງຖິ່ນເພື່ອການນັດໝາຍ)

### ມື້ທີ 2: ປະເທດຍີປຸ່ນ – ເກາະຮອນຊູ – ສະໜາມບິນນານາຊາດນາຣິຕະ – ນະມັດສະການຫຼວງພໍ່ໂຕກາງແຈ້ງເມືອງຄາມາຄູຣະ(ວັດໂຄໂຕຄຸອິນ) – ມິຊິມະ ສະກາຍວ໋ອກ – ເກັບສະຕໍເບີຣີສົດໆຈາກສວນ – ອາບນໍ້າແຮ່ຍີປຸ່ນທາມະຊາດ

- 08:00 ໂມງ: ເດີນທາງເຖິງ ປະເທດຍີປຸ່ນ ທີ່ສະໜາມບິນນານາຊາດ ນາຣິຕະ ເທິງເກາະຮອນຊູ ເກາະທີ່ມີຂະໜາດໃຫຍ່ທີ່ສຸດໃນປະເທດຍີປຸ່ນ ຫຼັງຜ່ານຂັ້ນຕອນການກວດຄົນເຂົ້າເມືອງ ແລະ ຮັບສໍາພາລະຮຽບຮ້ອຍ.
-  
- “ນະມັດສະການຫຼວງພໍ່ໂຕໄດບຸທສຶກາງແຈ້ງເມືອງຄາມາຄູຣະ” ສ້າງດ້ວຍສໍາຣິດ ຄວາມສູງ 13.35ແມັດ ເປັນພຣະອາມິດຕາພຸດ ນຽວໄຣ ແຕ່ກ່ອນພຣະອົງໃຫຍ່ບໍ່ໄດ້ຢູ່ກາງແຈ້ງຢ່າງທີ່ເຫັນກັນທຸກວັນນີ້ ແຕ່ເປັນເພາະໄພທໍາມະຊາດຕ່າງໆ ທີ່ພັດເອົາໂບດ ແລະ ສິ່ງກໍ່ສ້າງບໍລິເວນນັ້ນຫາຍໄປໝົດ ເຫຼືອແຕ່ພຣະໄດບຸທສຶ ຢ່າງທີ່ເຫັນນອກຈາກນີ້ຍັງມີຄວາມເຊື່ອວ່າພຣະໄດບຸທສຶເປັນຜູ້ປົກປ້ອງແຜ່ນດິນຍີປຸ່ນໄວ້ຈາກການຮຸກຮານຂອງສັດຕູອີກດ້ວຍ (ຂຶ້ນຢູ່ກັບສະພາບອາກາດ)
- 12:00 ໂມງ: ຮັບປະທານອາຫານທ່ຽງທີ່ພັດຕະຄານ.

- 13:00 ໂມງ: ນຳທ່ານເດີນທາງໄປສູ່ "ມິຊິມະ ສະກາຍວ໋ອກ" ຕັ້ງຢູ່ທີ່ເມືອງມິຊິຍະ ຈັງຫວັດຊິຊຸໂອກະ ຂົວແຂວນແຫ່ງນີ້ມີຄວາມຍາວເຖິງ 400ແມັດ ແລະ ມີຄວາມສູງເຖິງ 70.6ແມັດ ເຊິ່ງເປັນຂົວແຂວນທີ່ຍາວທີ່ສຸດຂອງປະເທດຍີປຸ່ນ ນັບວ່າເປັນອີກໜຶ່ງຈຸດຊົມວິວທີ່ສວຍງາມທີ່ສຸດອີກແຫ່ງໃນຍີປຸ່ນ ທ່ານສາມາດເພີດເພີນໄປກັບວິນເທິງຂົວແຫ່ງນີ້ ໄດ້ແບບ 360ອົງສາ.






- ນຳທ່ານສູ່ "ສວນດອກໄມ້" ຮ່ວມມ່ວນຊື່ນກັບປະສົບການໃນການເກັບໝາກສະຕໍເບີລີ ສົດຈາກສວນ "ສະຕໍເບີລີ" ໃຫ້ທ່ານໄດ້ເກັບສະຕໍເບີລີສົດຈາກຕົ້ນ ແລະ ອີ່ມແຊບຢ່າງເຕັມທີ່ ດ້ວຍຂັ້ນຕອນຂອງວິທີການປູກທີ່ພິຖີພິຖັນຄວາມເອົາໃຈໃສ່ ຕັ້ງໃຈດູແລດ້ວຍວິທີທຳມະຊາດຫຼາຍທີ່ສຸດ ບໍ່ມີການໃຊ້ສານເຄມີເພື່ອກໍ່ໃຫ້ເກີດອັນຕະລາຍຈຶ່ງໄດ້ຜົນໃຫຍ່ສີແດງສົດທົ່ວທັງລູກ ແລະ ຫວານຫອມ ຮັບປະກັນຄວາມແຊບແນ່ນອນ (ສາຍພັນຂື້ນຢູ່ກັບສະພາບອາກາດ ແລະ ລະດູການ)... ນາທ່ານເດີນທາງສູ່ "ທະເລສາບຄາວາກຸຈິໂກະ" ເປັນທະເລສາບທີ່ມີຊື່ສຽງຢູ່ຍີປຸ່ນ ດ້ວຍທັດສະນີຍະພາບຂອງພູເຂົາໄຟຟູຈິທີ່ສະທ້ອນຢູ່ເທິງຜິວນ້ຳໃສໆ ເຮັດໃຫ້ເປັນພາບທີ່ງົດງາມຈັບໃຈ.
- 18:30 ໂມງ: ຮັບປະທານອາຫານຄ່ຳ ພາຍໃນໂຮງແຮມ ບໍລິການທ່ານດ້ວຍບຸບເຟນານາຊາດ ພ້ອມຂາປູຍັກ(ບໍ່ອັ້ນ). ຫຼັງຈາກນັ້ນພັກຜ່ອນຕາມອັດທະຍາໄສ. ທີ່ໂຮງແຮມ JIRAGONNO KAWAGUCHIKO HOTEL ຫຼື ທຽບເທົ່າ.
- ພິເສດ ໂຮງແຮມແຫ່ງນີ້ທ່ານຈະໄດ້ສຳຜັດກັບການອາບນ້ຳແຮ່ຍີປຸ່ນ ເພື່ອເປັນການພັກຜ່ອນຈາກການທີ່ໄດ້ ເມື່ອຍເພຍກັບການເດີນທາງຫຼືເຮັດກິດຈະກຳມາຕະຫຼອດມື້ ການແຊ່ນ້ຳແຮ່ທຳມະຊາດເປັນວັດທະນະທຳດັ້ງເດີມຂອງຍີປຸ່ນມາຢ່າງດົນນານ ຕັ້ງແຕ່ອາດີດຈົນເຖິງປັດຈຸບັນ ແລະ ຍັງຄົງໄດ້ຮັບການຮັກສາ ແລະ ສືບທອດຕໍ່ກັນມາເປັນຢ່າງດີ ເຮັດໃຫ້ເປັນທີ່ຮູ້ຈັກຢ່າງແຜ່ຫຼາຍໃນນານາປະເທດ ແລະ ເຊື່ອໃນເລື່ອງການບຳລຸງການໄຫຼວຽນເລືອດ

**ມື້ທີ 3: ທະເລສາບຄາວາກຸຈິໂກະ – ຖ່າຍຮູບພູເຂົາໄຟຟູຈິ ສວນສາທາລະນະ ໂອອິຊິ – ຊິມຊາກູລະ ສວນສາທາລະນະ ອາຣາຄຸຣະຍາມະ ເຊັນເກັນ – ເມືອງໂກເທັມບະ – ອິດສະຫຼະຊ໋ອບປີ້ງ ໂກເທັມບະ ພຣີມ້ຽມ ເອົ້າເລັດ – ມະຫານະຄອນໂຕກຽວ**

- 07:00 ໂມງ: ຮັບປະທານອາຫານເຊົ້າ ອາຫານບຸບເຟນາໆຊາດທີ່ໂຮງແຮມ. Check Out.





ນຳທ່ານຖ່າຍຮູບພູເຂົາໄຟຟູຈິ "ສວນສາທາລະນະ ໂອອິຊິ" ເປັນສວນສາທາລະນະທີ່ຕັ້ງຢູ່ແຄມທະເລສາບຄາວາກຸຈິໂກະ ແຂວງຍາມານາຊິ ທີ່ນີ້ຂຶ້ນຊື່ເລື່ອງທິວທັດອັນງົດງາມຂອງພູເຂົາໄຟຟູຈິທີ່ແນມເຫັນໄດ້ຊັດເຈນ ແລະ ດອກໄມ້ ນານາຊະນິດທີ່ບານສະພັ່ງຕະຫຼອດທັງປີ ເຮັດໃຫ້ສວນແຫ່ງນີ້ເປັນຈຸດໝາຍປາຍທາງຍອດນິຍົມສຳຫຼັບນັກທ່ອງທ່ຽວທີ່ຕ້ອງການສຳພັດທຳມະຊາດອັນບໍລິສຸດ.

ນຳທ່ານຊົມຊາກຸລະ "ສວນສາທາລະນະ ອາຣາຄຸຣະຍາມະ ເຊັນເກັນ" ໃນຊ່ວງລະດູໃບໄມ້ປົ່ງຄືພາບວາດທີ່ທຳມະຊາດສ້າງສັນຂຶ້ນມາເອງ ດອກຊາກຸລະສີບົວ ສະພັ່ງອ້ອມຮອບ ເຈດີສີແດງສົດຕັດກັບທ້ອງຟ້າສີຄາມ ແລະ ພູເຂົາໄຟຟູຈິທີ່ຕັ້ງສະຫງ່າຢູ່ເບື້ອງຫຼັງ ເປັນພາບທີ່ງົດງາມຄືກັບຮູບພາບວາດຍີ່ປຸ່ນ (ຂຶ້ນຢູ່ກັບສະພາບອາກາດ)




- 12:00 ໂມງ: ຮັບປະທານອາຫານທ່ຽງ.




- 13:00 ໂມງ: ນຳທ່ານເດີນທາງສູ່ເມືອງ "ໂກເທັມບະ" ເພື່ອໃຫ້ທ່ານໄດ້ອິດສະຫຼະຊ໋ອບປິ້ງ "ໂກະເທັມບະ ພຣີມ້ຽມ ເອົາເລັດ" ສູນລວມແຟຊັນທັນສະໄໝທີ່ລາຄາຖືກຈົນທ່ານແປກໃຈແຫຼ່ງລວມພົນຂອງແບຣນເນມຊື່ດັງທົ່ວໂລກ ທັງແຟຊັນນຳສະໄໝຂອງຄົນທຸກໄວ ຫຼື ແຟຊັນກິລາຈາກທົ່ວທຸກຄ້າຍທີ່ພ້ອມໃຈກັນມາລົດລາຄາກັນຕະຫຼອດປີ ຢ່າງເຊັ່ນ: COACH, TIMBERLAND, NIKE, PUMA, HUSH PUPPIES, ADIDAS ແລະ ສິນຄ້າແບຣນເນມອື່ນໆອີກຫຼາກຫຼາຍ
- ນຳທ່ານເດີນທາງສູ່ "ມະຫານະຄອນໂຕກຽວ" ເມືອງຫຼວງຂອງປະເທດຍີ່ປຸ່ນ ເປັນມະຫານະຄອນທີ່ເຕັມໄປດ້ວຍສີສັນວັດທະນະທຳ ເທັກໂນໂລຍີ ແລະ ຄວາມທັນສະໄໝ ດຶງດູດນັກທ່ອງທ່ຽວຈາກທົ່ວໂລກ ມາສຳຜັດປະສົບການອັນໜ້າຕື່ນຕາຕື່ນໃຈ
- 19:15 ໂມງ: ຮັບປະທານອາຫານຄ່ຳ.
- 20:00 ໂມງ: ນຳຄະນະກັບທີ່ພັກ ແລະ ພັກຜ່ອນຕາມອັດທະຍາໄສ. ທີ່ໂຮງແຮມ SUNSHINE CITY PRINCE HOTEL ຫຼື ທຽບເທົ່າ

ວັນທີ 4: ໂຕກຽວ – ຕະຫຼາດປາສືກິຈິ – ນະມັດສະການເຈົ້າແມ່ກວນອິມ ວັດອາຊາກຸສະ – ຊົມຊາກຸລະ ສວນອຸເອໂນະ – ອິດສະຫຼະຊ໋ອບປີ້ງຍ່ານຊິນຈູກຸ

- 08:00 ໂມງ: ຮັບປະທານອາຫານເຊົ້າ ອາຫານບຸບເຟນາໆຊາດທີ່ໂຮງແຮມ. Check Out.
- 09:00 ໂມງ: ດື່ມດ່ຳກັບບັນຍາກາດຄຶກຄັກທີ່ "ຕະຫຼາດປາສືກິຈິ" ແຫຼ່ງລວມວັດຖຸດິບຊັ້ນເລີດໃຈກາງກຸງໂຕກຽວ ສາຜັດວິຖີຊີວິດການຄ້າຂາຍແບບດັ້ງເດີມຂອງຊາວຍີ່ປຸ່ນ ລອງອາຫານທະເລສົດໃໝ່ ຫຼາກຫຼາຍຊະນິດຈາກຮ້ານຄ້າຫຼາກຫຼາຍ ບໍ່ວ່າຈະເປັນ ຊູຊິ ຊາຊິມິ ປາມຶກຍັກ ປູ ຫອຍນາງລົມ ແລະ ອື່ນໆອີກຫຼາກຫຼາຍ.




- ສຳຜັດປະສົບການທາງວັດທະນະທຳອັນລ້ຳຄ່າ "ວັດອາຊາກຸສະ" ວັດພຸດທີ່ເກົ່າແກ່ທີ່ສຸດໃນກຸງໂຕກຽວ ໂດ່ງດັງໄປທົ່ວໂລກດ້ວຍ ປະຕູຄາມິນາຣິມອນ (ໂຄມແດງຍັກ) ອັນເປັນສັນຍາລັກ ແລະ ທີ່ສຳຄັນຄືເປັນທີ່ປະດິດຖານ ເຈົ້າແມ່ກວນອິມ ອົງໂພທິສັດຜູ້ປຽມດ້ວຍເມດຕາ.




- 12:00 ໂມງ: ຮັບປະທານອາຫານທ່ຽງທີ່ພັດຕະຄານ.
- 13:00 ໂມງ: ນຳທ່ານຊົມຊາກຸລະ "ສວນອຸເອໂນະ" ເປັນໜຶ່ງໃນສະຖານທີ່ຊົມຊາກຸລະທີ່ໄດ້ຮັບຄວາມນິຍົມຫຼາຍທີ່ສຸດໃນໂຕກຽວຕົ້ນຊາກຸລະພັນໂຊເມອິໂຍຊິໂນະ ກວ່າ 800 ຕົ້ນ ຈະບານສະພັ່ງໃນຊ່ວງປາຍເດືອນມີນາເຖິງຕົ້ນເດືອນເມສາ ສ້າງຄວາມປະທັບໃຈໃຫ້ແກ່ຜູ້ມາເຢືອນທຸກປີ (ຂຶ້ນຢູ່ກັບສະພາບອາກາດ).

บริษัท กูรูทริป จำกัด | Guru Trip Co.,Ltd
ใบอนุญาตเลขที่ 11/09033
Website : www.GuruTrip.co.th
Email : info.gurutrip@gmail.com
Hotline : 061-229-6955 , 094-519-4163
Tel Office : 02-003-1196
Head Office : 15-122 Ban Lakmuang Pakse Champasak Province, Lao P.D.R
ໂທ / : +856 2055532069 | LINE : somphonexaytour
: somphonexaytour@gmail.com | somphonexay@me.com
: www.somphonexaytour.com
SOMPHONEXAY TOUR




ນຳທ່ານອິດສະຫຼະກັບການເລືອກຊື້ສິນຄ້າ ຍ່ານທີ່ພວກເຮົາຄຸ້ນເຄີຍ ແລະ ຮູ້ຈັກເປັນຢ່າງດີ "ຍ່ານຊິນຈຸກຸ" ເພີດເພີນກັບການຈັບຈ່າຍສິນຄ້ານານາຊະນິດຂອງນັກທ່ອງທ່ຽວທຸກເພດທຸກໄວ ສາມາດຫາຊື້ສິນຄ້າຫຼາກຫຼາຍຊະນິດໄດ້ຈາກທີ່ນີ້ ບໍ່ວ່າຈະເປັນ ຮ້ານເກມ ຮ້ານຂາຍເຄື່ອງເອເລັກໂທນິກ ກ້ອງຖ່າຍຮູບດິຈິຕອນ ໂມງ ເຄື່ອງສຳອາງ ຜະແນກເຄື່ອງກິລາ ແລະ ອື່ນໆ ໃຫ້ທ່ານໄດ້ມ່ວນຊື່ນກັບການຊື້ສິນຄ້າຢ່າງຈຸໃຈ.




- 18:30 ໂມງ: ຮັບປະທານອາຫານຄ່ຳທີ່ພັດຕະຄານ.
- 20:00 ໂມງ: ນຳຄະນະກັບທີ່ພັກ ແລະ ພັກຜ່ອນຕາມອັດທະຍາໄສ. ທີ່ໂຮງແຮມ Narita Welco Narita HOTEL ຫຼື ທຽບເທົ່າ

| ວັນທີ 5: ຍີ່ປຸ່ນ (ໂຕກຽວ ສະໜາມບິນນານາຊາດນາຣິຕະ) - ຫວຽດນາມ (ໂຫ່ຈິມິນ ສະໜາມບິນເຕີນເຊີນເຍິດ) |
|---|

- 05:00 ໂມງ: ອອກເດີນທາງໄປສະໜາມບິນນາຣິຕະດ້ວຍລົດບັດ ໂຄສະເຕີ ໄປສະໜາມບິນນານາຊາດນາຣິຕະ ເພື່ອເດີນທາງກັບນະຄອນໂຫ່ຈິມິນ. (ຮັບປະທານອາຫານເຊົ້າ-ອາຫານກ່ອງ ເທິງລົດບັດ)
- 08:00 ໂມງ: ອອກເດີນທາງໄປນະຄອນນະຄອນໂຫ່ຈິມິນດ້ວຍຖ້ຽວບິນ ຫວຽດແຈັດ ຖ້ຽວ VJ823 (0855–1255)
- 12:55 ໂມງ: ຮັບຄະນະທົວທີ່ສະໜາມບິນ, ນຳຄະນະທົວຂຶ້ນລົດບັດໂຄສເຕີ, ທ່ຽວຊົມຕົວເມືອງຂອງນະຄອນໂຫ່ຈິມິນ, ເກັບພາບປະທັບຢູ່ດ້ານນອກຂອງສາລາກາງ Ho Chi Minh City Hall ເປັນຕຶກໂດດເດັ່ນ ສີເຫລືອງຄີມສວຍງາມສະຕາຍໂຄໂລນຽວຝລັ່ງເສດ, ທ່ຽວຊົມ The Opera House ໂຮງລະຄອນເທດສະບານໂຫ່ຈິມິນ ໂຮງລະຄອນສະຖາປັດຕະຍາກຳອະນານິຄົມຝລັ່ງເສດ Eugene Ferret. ຈາກນັ້ນຊົມໂບດ Notre Dame Cathedral ໂບດແຄັດເຕີລິກອັນເກົ່າແກ່ ແລະ ຕຶກໄປສະນີເກົ່າແຫ່ງໄຊງອນ ກໍ່ສ້າງໃນອະນານິຄົມຂອງຝລັ່ງເສດ. ແວ່ຊ໊ອບປິ້ງທີ່

ເລກລະຫັດວິສາຫະກິດ : 16-00011201
ເລກປະຈຳຕົວຜູ້ເສຍອາກອນ : 216741112-0-00
DBD Registered
TAT 11/09033
เลขประจำตัวผู้เสียภาษี : 0105560161101
บริษัท กูรูทริป จำกัด
88/35 หมู่บ้านดุสิตแกรนด์ปาร์ค
แขวงบางชัน เขตคลองสามวา กรุงเทพฯ 10510

ຕະຫລາດເບັນຖັ້ນ.

- 17:00 ໂມງ: ນຳຄະນະເຊັກອິນໂຮງແຮມ Acnos Saigon Centre HOTEL (3***) ຫຼື ທຽບເທົ່າ
- 19:00 ໂມງ: ຮັບປະທານອາຫານທ່ຽງ ພັກຜ່ອນຕາມອັດຕະຍາໃສ.







| ວັນທີ 6: ຕສະໜາມບິນເຕີນເຊີນເຍີດ-ສະໜາມບິນສາກົນປາກເຊ-ນະຄອນປາກເຊ |
|---|

- 07:00 ໂມງ: ຮັບປະທານອາຫານເຊົ້າທີ່ໂຮງແຮມ, ອິດສະຫລະຊອບປີ້ງທີ່ຕະຫລາດເບັນຖັ່ນ.
- 08:30 ໂມງ: ນຳຄະນະເຊັກອິນ ເຄົາເຕີສາຍການບິນລາວແອລາຍ **ຖ້ຽວບິນ QV 516 (1200-1330).**
- 12:00 ໂມງ: ເດີນທາງກັບນະຄອນປາກເຊ ດ້ວຍສະຫວັດດີພາບ.

## --- ຂອບໃຈທຸກທ່ານທີ່ໃຊ້ບໍລິການຂອງພວກເຮົາ ---

**ລາຍການທ່ອງທ່ຽວອາດປ່ຽນແປງໄດ້ ໂດຍອີງໃສ່ຜົນປະໂຫຍດຂອງລູກຄ້າເປັນຫລັກສຳຄັນ**
ກ່ອນຈະຈ່ອງທົວທຸກຄັ້ງ ກະລຸນາອ່ານໂປຣແກມຢ່າງລະອຽດທຸກໜ້າ ແລະ ທຸກແຖວ ເນື່ອງຈາກວ່າທາງບໍລິສັດຈະອີງຕາມລາຍລະອຽດຂອງ ໂປຣແກມທີ່ຂາຍເປັນຫຼັກ.
ລາຄານີ້ແມ່ນ ຄິດໄລ່ເລີ່ມຕົ້ນ 15-19 ທ່ານຂຶ້ນໄປ

| ໂຮງແຮມ | ລາຄາຜູ້ໃຫຍ່ (ພັກຫ້ອງລະ2 ທ່ານ) | ລາຄາເດັກເສີມຕຽງ (ພັກກັບຜູ້ໃຫຍ່ 2 ທ່ານ) | ລາຄາເດັກບໍ່ເສີມຕຽງ (ພັກກັບຜູ້ໃຫຍ່ 2 ທ່ານ) | ພັກດ່ຽວ ຈ່າຍເພີ່ມ |
|---|---|---|---|---|
| ມາດຕະຖານ 3-4 ດາວ ★★★★ | 2.169 USD | | | 215 USD |

UPDATE 01/10/2024

ໝາຍເຫດ ລາຍການອາດມີການປ່ຽນແປງໄດ້ ທັງນີ້ໂດຍຄຳນຶງເຖິງຜົນປະໂຫຍດຂອງລູກຄ້າເປັນຫຼັກ

- ໃນກໍລະນີຄະນະເດີນທາງຕ່ຳກວ່າ 15 ທ່ານ ຫຼື ມາດຕະຖານຂອງການຢັ້ງຢືນການເດີນທາງ ຈະມີການປ່ຽນແປງ ຂະໜາດຂອງພາຫານະທີ່ໃຊ້ໃນການນຳທ່ຽວ ຕະຫຼອດລາຍການທົວໂດຍບໍ່ຕ້ອງແຈ້ງໃຫ້ຊາບລ່ວງໜ້າ
- ໃນກໍລະນີຄະນະເດີນທາງຕ່ຳກວ່າ 15ທ່ານ ຫຼື ຕ່ຳກວ່າມາດຕະຖານຂອງການຢັ້ງຢືນການເດີນທາງ ທາງຜູ້ຈັດລາຍການ ຂໍຍົກເລີກການເດີນທາງ ຫຼື ອາດຈະແຈ້ງຕໍ່ທາງຄະນະທົວໃຫ້ຊາບວ່າມີການຮຽກເກັບຄ່າທົວເພີ່ມ ໃນກໍລະນີທີ່ຕ່ຳກວ່າ 15 ທ່ານ ຕາມຄວາມເໝາະສົມແລະເປັນຈິງ.
- ທາງບໍລິສັດ ຂໍຄວາມກະລຸນາໃຫ້ທ່ານສຶກສາລາຍລະອຽດ ທັງໝົດກ່ອນທຳການຈອງ ໂດຍລະອຽດທຸກຂໍ້

| ເງື່ອນໄຂການຈ່ອງທົວ |
|---|

- ງວດທີ 1 : ຈ່ອງທີ່ນັ່ງຈ່າຍມັດຈຳ 1.000$ /ທ່ານ ພາຍໃນ 3 ວັນຫຼັງຈາກທີ່ມີການຈອງ (ເພື່ອເປັນການຢັ້ງຢືນການເດີນທາງ) ພ້ອມສົ່ງລາຍຊື່ ແລະ ໜ້າ ພາສປອດຜູ້ທີ່ຈະເດີນທາງທັນທີ,

- ງວດທີ 2 : ຊຳລະຍອດສ່ວນທີ່ເຫຼືອ ກ່ອນການເດີນທາງບໍ່ຕ່ຳກວ່າ 20 ວັນ ຫາກບໍ່ຊຳລະຄ່າໃຊ້ຈ່າຍພາຍໃນມື້ທີ່ກຳນົດ ທາງບໍລິສັດຈະຖືວ່າທ່ານຍົກເລີກການເດີນທາງໂດຍອັດຕະໂນມັດ
- ກໍລະນີຕ້ອງການອອກຕົວພາຍໃນປະເທດ ກໍລະນີລູກຄ້າຢູ່ຕ່າງແຂວງໃຫ້ທ່ານຕິດຕໍ່ເຈົ້າໜ້າທີ່ກ່ອນອອກບັດ ໂດຍສານທຸກຄັ້ງ ຫາກອອກບັດໂດຍສານໂດຍບໍ່ແຈ້ງເຈົ້າໜ້າທີ່ ທາງບໍລິສັດຂໍສະຫງວນສິດບໍ່ຮັບຜິດຊອບຄ່າໃຊ້ຈ່າຍທີ່ເກີດຂຶ້ນ.
- ຫຼັງຈາກຊຳລະຄ່າມັດຈຳແລ້ວ ສາມາດປ່ຽນຊື່ຜູ້ເດີນທາງໄດ້ ກ່ອນທີ່ບໍລິສັດ ຈະທຳການອອກປີ້ລ່ວງໜ້າ 1-2 ອາທິດ ກ່ອນການເດີນທາງແຕ່ທັງນີ້ຕ້ອງຍຶດກົດຂອງສາຍການບິນເປັນຫຼັກ.

| ເງື່ອນໄຂການຍົກເລີກທົວ |
|---|

- ກໍລະນີຍົກເລີກຫຼັງຈາກວາງເງິນມັດຈຳ ບໍລິສັດຈະຄິດຄ່າໃຊ້ຈ່າຍທີ່ເກີດຂຶ້ນແທ້ ໃນມື້ນັ້ນ ທີ່ບໍ່ສາມາດຄືນເງິນໄດ້ (ຕົວຢ່າງເຊັ່ນ ຄ່າປີ້ຍົນ, ຄ່າວີຊາ, ຄ່າມັດຈຳຫ້ອງພັກ ເປັນຕົ້ນ)
- ກໍລະນີຍົກເລີກຫຼັງຈາກຈ່າຍເງິນເຕັມຈຳນວນ ບໍລິສັດຂໍສະຫງວນສິດໃນການຄືນເງິນທັງໝົດໃນທຸກກໍລະນີ ກໍລະນີເຈັບປ່ວຍຈົນບໍ່ສາມາດເດີນທາງໄດ້ ຕ້ອງມີໃບຮັບຮອງແພດຈາກໂຮງໝໍຮັບຮອງ ບໍລິສັດຈະເຮັດເລື່ອງຍື່ນເອກະສານໄປຍັງ ລົດໄຟ ສາຍການບິນ ໂຮງແຮມ ແລະ ໃນທຸກໆການໃຫ້ບໍລິການ ເພື່ອໃຫ້ພິຈາລະນາອີກຄັ້ງ ທັງນີ້ ອາຈະຕ້ອງ ໃຊ້ເວລາໃນການດຳເນີນການ ເຊິ່ງບໍ່ສາມາດແຈ້ງໄດ້ວ່າສາມາດຄືນເງິນໄດ້ທັງໝົດຫຼືບາງສ່ວນ ຫຼື ບໍ່ໄດ້ເລີຍ ເພາະຂຶ້ນຢູ່ກັບການພິຈາລະນະແລະຕັດສິນໃຈຂອງສາຍການບິນ ໂຮງແຮມ ແລະ ທຸກໆບໍລິການອື່ນໆເປັນສຳຄັນ

| ອັດຕາຄ່າບໍລິການນີ້ລວມມີ |
|---|

- ຄ່າປີ້ຍົນໄປກັບ ປາກເຊ-ນະຄອນໂຮ່ຈິມິນ, ນະຄອນໂຮ່ຈິມິນຍີ່ປຸ່ນ
- ຄ່າທີ່ພັກຢູ່ໂຮງແຮມ 3-4 ດາວ 3 ຄືນ (1 ຫ້ອງ/ 2 ທ່ານ) ທີ່ຍີ່ປຸ່ນ.
- ຄ່າທີ່ພັກຢູ່ໂຮງແຮມ 3 ດາວ 1 ຄືນ (1 ຫ້ອງ/ 2 ທ່ານ) ທີ່ໂຮ່ຈິມິນ.
- ຄ່າລົດບັດໂຄສເຕີປັບອາກາດ ບໍລິການທຸກມື້ຮອກ 08 ໂມງແລງ
- ຄ່າເຂົ້າຊົມສະຖານທີ່ທ່ອງທ່ຽວ ທີ່ໄດ້ລະບຸໃນລາຍການ.
- ຄ່າ ອາຫານ 11 ຄາບ ທີ່ລະບຸໄວ້ໃນລາຍການ
- ຄ່າມັດຄຸເທດພາສາໄທ 4ມື້ 3 ຄືນ ທີ່ຍີ່ປຸ່ນ
- ຄ່າມັດຄຸເທດພາສາໄທ 4ມື້ 1 ຄືນ ທີ່ໂຮ່ຈິມິນ
- ຄ່າທິບທຣິບໄກ໋ນຳທ່ຽວ (ພາສາໄທ)ແລະ ໄຊເຟີລົດຕະຫລອດລາຍການທົວ.
- ຄ່ານ້ຳດື່ມ 1 ຕຸກ/ທ່ານ/ຜື້ນ

## ອັດຕານີ້ບໍ່ລວມ

- ☒ ຄ່າວີຊາຍີ່ປຸ່ນ 90 ໂດລາ/ທ່ານ
- ☒ ຄ່າອາຫານ ແລະ ເຄື່ອງດື່ມນອກລາຍການ
- ☒ ຄ່າໃຊ້ຈ່າຍສ່ວນຕົວ ອາຫານ ແລະ ເຄື່ອງດື່ມ.
- ☒ ຄ່າປະກັນໄພທຳມະຊາດ ແລະ ປະກັນຊີວິດສ່ວນຕົວ ແລະ ປະກັນສຸຂະພາບ

## ໝາຍເຫດ

- ➢ ບໍລິສັດ ຂໍສະຫງວນສິດຍົກເລີກການເດີນທາງກ່ອນລ່ວງໜ້າ 15 ມື້ ໃນກໍລະນີບໍ່ສາມາດເຮັດກຸ່ມໄດ້ຢ່າງນ້ອຍ 12 ທ່ານ ເຊິ່ງໃນກໍລະນີທາງບໍລິສັດຍິນດີຄືນເງິນໃຫ້ທັງໝົດ ຫຼື ຈັດຫາຄະນະທົວອື່ນໃຫ້ຖ້າຕ້ອງການ,

  ບໍລິສັດ ຂໍສະຫງວນທີ່ຈະປ່ຽນແປງລາຍລະອຽດບາງປະການໃນທົວນີ້ ເມື່ອເກີດເຫດຈຳເປັນ ສຸດວິໄສ ຈົນບໍ່ອາດແກ້ໄຂໄດ້ ແລະ ຈະບໍ່ຮັບຜິດຊອບໃດໆ ໃນກໍລະນີສູນຫາຍ ສູນເສຍ ຫຼື ໄດ້ຮັບບາດເຈັບ ທີ່ນອກເໜືອຄວາມຮັບຜິດຊອບຂອງຫົວໜ້າທົວ ແລະເຫດສຸດວິໄສບາງປະການເຊັ່ນ ການນັດພັກງານ ໄພທຳມະຊາດ ການກໍຈະລາຈົນຕ່າງໆ,
- ➢ ບໍລິສັດ ບໍ່ຮັບຜິດຊອບຄ່າເສຍຫາຍໃນເຫດການທີ່ເກີດຈາກສາຍການບິນ ລົດໄຟຄວາມໄວສູງ ໄພທຳມະຊາດ ປະທ້ວງ ແລະ ອື່ນໆທີ່ນອກເໜືອການຄວບຄຸມຂອງທາງບໍລິສັດ ຫຼື ຄ່າໃຊ້ຈ່າຍເພີ່ມຂຶ້ນທາງກົງ ຫຼື ທາງອ້ອມ ເຊັ່ນການເຈັບປ່ວຍ ການຖືກທຳຮ້າຍ ການສູນຫາຍ ຈາກສາຍການບິນ ຫຼື ລົດໄຟຄວາມໄວສູງ ເມື່ອຖ້ຽວບິນ "ດີເລ" ຫຼື ລ່າຊ້າ ຫຼືເຫດສຸດວິໄສ ແລະ ອຸປະຕິເຫດຕ່າງໆ
- ➢ ລາຄານີ້ຄິດຕາມລາຄາບັດໂດຍສານເຄື່ອງບິນ ນະ ເວລາປັດຈຸບັນ ຫາກມີການປັບລາຄາບັດໂດຍສານສູງຂຶ້ນ ຕາມອັດຕາຄ່ານ້ຳມັນ ຫຼື ຄ່າເງິນແລກປ່ຽນ ທາງບໍລິສັດຂໍສະຫງວນສິດທີ່ຈະປັບລາຄານີ້ ຕາມສະຖານະການ ດັ່ງກ່າວແລະແຈ້ງໃຫ້ທ່ານຮັບຊາບ
- ➢ ເນື່ອງຈາກລາຍການທົວນີ້ເປັນແບບເໝົາຈ່າຍຮຽບຮ້ອຍ ຫາກທ່ານສະຫຼະສິດການໃຊ້ບໍລິການໃດໆ ຕາມລາຍການ ຫຼື ຖືກປະຕິເສດການເຂົ້າປະເທດບໍ່ວ່າຈະກໍລະນີໃດກໍ່ຕາມທາງບໍລິສັດ ຂໍສະຫງວນສິດບໍ່ຄືນເງິນໃນທຸກກໍລະນີ
- ➢ ກໍລະນີຜູ້ເດີນທາງບໍ່ສາມາດ ເຂົ້າ-ອອກເມືອງໄດ້ເນື່ອງຈາກປອມແປງ ຫຼື ການຫ້າມຂອງເຈົ້າໜ້າທີ່ບໍ່ວ່າຈະເຫດຜົນໃດໆ ທາງບໍລິສັດຂໍສະຫງວນສິດໃນການບໍ່ສົ່ງເງິນຄືນຄ່າທົວທັງໝົດ
- ➢ ຫາກລູກຄ້າທ່ານໃດ ຍື່ນວີຊາແລ້ວບໍ່ໄດ້ຮັບການອະນຸມັດ ລູກຄ້າຕ້ອງຊຳລະຄ່າວີຊາຕາມສະຖານທູດຮຽກເກັບ
- ➢ ໃນກໍລະນີທ່ານຜູ້ໂດຍສານຕ້ອງການໃຊ້ພາສປອດສີຂຽວ (ລັດທະກອນ) ໃນການເດີນທາງບໍລິສັດຂໍສະຫງວນສິດບໍ່ຮັບຜິດຊອບໃດໆໃນການທີ່ທ່ານອາດຈະຖືກປະຕິເສດບໍ່ໃຫ້ເຂົ້າເມືອງ ເພາະໂດຍປົກກະຕິໃນການທ່ອງທ່ຽວ ຈະໃຊ້ປຶ້ມສີຟ້າ
- ➢ ຮູບທີ່ໃຊ້ໃນການປະກອບໃນໂປແກມໃຊ້ເພື່ອຄວາມເຂົ້າໃຈໃນມຸມມອງສະຖານທີ່ທ່ອງທ່ຽວ ຮູບໃຊ້ເພື່ອການໂຄສະນາເທົ່ານັ້ນ.

ການຊຳລະສະສາງສາມາດໂອນເຂົ້າບັນຊີພວກເຮົາໄດ້....



**GURU TRIP HOME**
หน้าหลักเว็บไซต์

ติมตามโปรโมชั่น
และเส้นทางที่น่าสนใจ
**Facebook**

**PROMOTION TOUR**
ราคาทัวร์โดนใจ
โปรโมชั่นลดราคา

กรุ๊ปเหมา สัมมนา
ดูงาน ท่องเที่ยวประจำปี
**GROUP PRIVATE INTENSIVE**

SCB

ธนาคารไทยพาณิชย์
สาขา แฟชั่นไอส์แลนด์
เลขที่บัญชี :
**171-407510-7**
**บริษัท กูรูทริป จำกัด**

การจองจะเสร็จสิ้นและสมบูรณ์เมื่อยอดและบัญชีตรงตาม ใบแจ้งยอด หรือใบแจ้งหนี้เท่านั้น และทางบริษัทต้องเป็นผู้ออกเอกสารกำกับ เพื่อให้ลูกค้าสามารถตรวจสอบยอดได้ถูกต้อง

หมายเหตุ : หากลูกค้าทำการโอนชำระโดยไม่มี ใบแจ้งหนี้หรือการแจ้งยอดจากเจ้าหน้าที่ที่รับผิดชอบ ทางบริษัทขอสงวนสิทธิ์ไม่รับผิดชอบทุกกรณี

ธนาคารกสิกรไทย
สาขา รามอินทรา109
เลขที่บัญชี :
**130-804415-3**
**บริษัท กูรูทริป จำกัด**

การจองจะเสร็จสิ้นและสมบูรณ์เมื่อยอดและบัญชีตรงตาม ใบแจ้งยอด หรือใบแจ้งหนี้เท่านั้น และทางบริษัทต้องเป็นผู้ออกเอกสารกำกับ เพื่อให้ลูกค้าสามารถตรวจสอบยอดได้ถูกต้อง

หมายเหตุ : หากลูกค้าทำการโอนชำระโดยไม่มี ใบแจ้งหนี้หรือการแจ้งยอดจากเจ้าหน้าที่ที่รับผิดชอบ ทางบริษัทขอสงวนสิทธิ์ไม่รับผิดชอบทุกกรณี

พาสปอร์ตต้องเหลืออายุการใช้งานมากกว่า 6 เดือน - ใบนัดหมายจะส่งให้ประมาณ 5-7 วัน ก่อนเดินทาง - ลูกค้ามีตั๋วภายในรบกวนแจ้งหน้าที่ก่อนทุกครั้ง ก่อนทำการจองทัวร์